

ໂຮມຜົນງານນາໆຊະນິດຂອງ ອຸທິນ ບຸນຍາວົງ

# ຈາກໄປ ແລ້ວ ສິບ ປີ

ເຫຼັ້ມ I ຜົນງານກ່ອນ 1975

# ຈາກໄປແລ້ວ ສິບປີ
# (ຍັງບໍ່ລືມ)



ຮວມຜົນງານນາໆຊະນິດຂອງ ອຸທິນ ບຸນຍາວົງ

ຈັດພິມເພື່ອແຈກຢາຍ ແລະ ຈຳໜ່າຍ
ໃນໂອກາດເຮັດບຸນທາດບຮອບ 10 ປີ ມໍລະນາການ
ໃນເດືອນ ມັງກອນ 2010 ທີ່ ສວນໄຜ່ພັນກໍ
ບ້ານໄຮ່, ເມືອງໄຊທານີ ນະຄອນຫຼວງວຽງຈັນ

# ຈາກໄປແລ້ວ ສິບປີ (ຍັງບໍ່ລືມ)

ຮວມຜົນງານນາໆຊະນິດຂອງ ອຸທິນ ບຸນຍາວົງ

ເຫຼັ້ມ I ຜົນງານກ່ອນ 1975

ທະບຽນອະນຸຍາດ: 001 ພຈ 12012010

ຈຳນວນພິມ : 3000

ພິມຄັ້ງທີ 1, ມັງກອນ 2010

ເພື່ອແຈກຢາຍ ແລະຈຳໜ່າຍ

ພິມທີ່ ພະໄຊ ກຣາຟິກ

ຮູບໜ້າປົກ ໂດຍ ສຸຣິນ ມຸກສີ

ອອກແບບ ຈັດໜ້າ ແລະຈັດຈຳໜ່າຍ ໂດຍ

ບໍລິສັດ ດອກເກດ ຈັດພິມ ຈຳກັດຜູ້ດຽວ

ຈັດພິມ ໂດຍ ສຳນັກພິມ ແລະຈຳໜ່າຍແຫ່ງລັດ

ວຽງຈັນ ສ. ປ. ປ. ລາວ 2010

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ແລງ ພູຜາເງິນ

ໂຮມຜົນງານນາໆ ຊະນິດຂອງອຸທິນ ບຸນຍາວົງ / ແລງ ພູຜາເງິນ. ວຽງຈັນ: ສຳນັກພິມແລະຈຳໜ່າຍແຫ່ງລັດ, 2010.

201 ໜ້າ : ພາບປະກອບ ; 20 ຊມ.

1. ເລື່ອງສັ້ນ. I. ຊື່ເລື່ອງ.

808.831--dc22

ISBN 978-9932-011-15-5

## ເຫຼັ້ມ I ຜົນງານກ່ອນ 1975

ແລງ ພູຜາເງິນ

### *ຊີວິດນີ້ ຄື ລະຄອນກ້ອມ*
### *ຜູ້ຍິງນໍ້ຜູ້ຍິງ*
### *ເລື່ອງສັ້ນລົງໃນວາລະສານຕ່າງໆ*

*ແດ່ ............*

*ຍຸງທີ່ຖືກຕົບ ຂະນະທີ່ຂຽນໜັງສືເຫຼັ້ມນີ້*

# ສາລະບັນ

ໜ້າ
ຄຳສະເໜີຂອງສຳນັກພິມ ກ
ຂໍເວົ້າສູ່ຟັງ ຂ
ດວງເດືອນ ບຸນຍາວົງ
ຊີວິດເທິງເສັ້ນທາງການເປັນນັກຂຽນ ຈ
ເລື່ອງສັ້ນອັນຈັບໃຈ ກ່ອນ 1975 ບ
ດາຣາ ວີຣະວົງສ໌ ກັນລະຍາ
ອຸທິນ ບຸນຍາວົງ ກັບອຸທິຍານອັກສອນ ຝ
ໄມພອນ ດວງພະສີ

## 52 ເລື່ອງສັ້ນຈາກ:
## ຊຸດ ຊີວິດນີ້ຄືລະຄອນກ້ອມ

| | | |
|---|---|---|
| 1 | ວຽງຈັນສະແຄ | 4 |
| 2 | ກາຫລົງ | 9 |
| 3 | ກ່ອນຈະສິ້ນແສງຫຽນ | 11 |
| 4 | ເມດອິນລາວໂອສ | 18 |
| 5 | ໂຈນເຮງຊວຍ | 20 |
| 6 | ໂຊກແລ່ນທັບ | 23 |
| 7 | ຄືນປ່ອຍຕຽງເບີຫ້າ | 25 |
| 8 | ກັບບ້ານ | 27 |
| 9 | ວິນຍານດິບ | 29 |
| 10 | ລຸງມີ | 34 |
| 11 | ເລກເກົ້າ | 35 |
| 12 | ນາງດອກຕຳແຍ | 38 |
| 13 | ເງິນ ເງິນ ເງິນ | 40 |

14 ສູນແປດ 42
15 ສະຫາຍຄົນຫຼັງສຸດ 45
16 ຊາກຮັກຣິມຝັ່ງນ້ຳປະສັກ 47
17 ບົດໜຶ່ງແຫ່ງຊີວິດ ນ້ຳຕາໃນສາຍຝົນ 51
18 ບົດໜຶ່ງແຫ່ງຊີວິດ ວັນສຸດທ້າຍ 52

## ຊຸດຜູ້ຍິງນັ້ຜູ້ຍິງ

19 ແມງໄມ້ເຂົ້າຕາ 53
20 ຜູ້ຍິງນັ້ຜູ້ຍິງ 54
21 ເຮົາຮັກກັນບໍ່ໄດ້ 58
22 ຕາມເຄີຍ 69
23 ກຳຂອງໃຜ 73
24 ທາງສາຍຄູວຽງ 76
25 ຂໍຢ່າໃຫ້ເຮົາພົບກັນດີກວ່າ 81
26 ລຸງສ່ຽວ 83
27 ອຳນາດພອນ 89
28 ກຳຂອງບັກກີ້ກີ້ 92
29 ສຽງສະອື້ນຈາກວຽງພູຄາ 93
30 ຝົນລົນທີ່ຫ້ວຍໝໍ້ 97
31 ນາງຜູ້ຄ່ຽມຄົມ 101
32 ດອກໄມ້ໄຮ້ຄ່າ 103
33 ໝອນຂ້າງກັບໜາມໝາກຈັບ 107
34 ລົມແລ້ງ 109
35 ຕົ້ນເຫດ 116
36 ເດືອນດັບທີ່ວຽງຈັນ 122
37 ຂັ້ນໄດຂັ້ນສຸດທ້າຍ 126
38 ບໍ່ເໝືອນຕາຍຈາກກັນ 131

39 ນ້ຳໃຈ 136

## ເລື່ອງສັ້ນລົງໃນວາລະສານອື່ນໆ

40 ແດງຈັນ 143
41 ບໍ່ບານສັງມາຫອມ 151
42 ລາຄາຂອງຄວາມຕາຍ 154
43 ເຮືອນເຊົ່າສີຟ້າຈາງໆ 157
44 ສຳນຶກຂອງຈິໂກະ 163
45 ລ.ຕ.ວ.ລ. 165
46 ຍິ້ມສີເຫຼືອງ 167
47 ນິຍາຍນີ້ຍັງບໍ່ສຸດ 171
48 ແຫວນວົງບ້ງວ 177
49 ຮັກນີ້ແສນຍາກ 181
50 ບັກດິ້ກບັກແດ້ງ 185
51 ຂ້ອຍບໍ່ຢາກນັ່ງບ່ອນຄົນມີກຽດ 190
52 ຕາຍຢ່າງໝາ 196

## ຄຳສະເໜີຂອງສຳນັກພິມ

ຜົນງານໂຮມເລື່ອງສັ້ນ ກ່ອນປີ 1975 ເຫຼັ້ມ I ຂອງ ອຸທິນ ບຸນຍາວົງ ຫຼື ຮູ້ຈັກກັນແຕ່ ກ່ອນໃນນາມ ແລງ ພູຜາເງິນ ນັກຂຽນຜູ້ຜ່ານຮ້ອນຜ່ານໜາວ ມາຍາວນານ ແມ່ນຜົນງານທີ່ເປັນສີສັນ ຕື່ມເຕີມຄວາມສົດຊື່ນແລະຫອມຫວນ ໃຫ້ແກ່ສວນອັກສອນແດນຈຳປາ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ຂອງພວກເຮົາຢ່າງແນ່ນອນ.
ໃນນາມຜູ້ອຳນວຍການ ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ຂ້າພະເຈົ້າ ມີຄວາມພາກພູມໃຈທີ່ໄດ້ຮ່ວມກັບຄອບຄົວຂອງ ທ່ານອຸທິນ ບຸນຍາວົງ ຈັດພິມຜົນງານຊຸດນີ້ອອກມາເປັນເຫຼັ້ມທີໜຶ່ງ ແລະຕໍ່ໆໄປຍັງຈະມີທີ II ແລະທີ III.
ພວກເຮົາຜູ້ເກີດລຸນຫຼັງປີ 1975 ໄດ້ຮຽນວັນນະຄະດີຢູ່ມັດທະຍົມ ຄົງຈື່ຈຳບົດເລື່ອງສັ້ນທີ່ ທາງກະຊວງສຶກສາທິການ ໄດ້ຄັດເລືອກເອົາໃສ່ຫຼັກສູດພາສາວັນນະຄະດີລາວ ຄື ເລື່ອງ ນົກບິນຂ້າມປາຍຕານ (ມໍ 5) ແລະເລື່ອງ ຄືນງາມ (ມໍ 3) ນັ້ນຄົງພໍແຕ່ເປັນການຊີມ ລາງລົດຊາດສີມື ຄາລົມ ສຳນວນ ຂອງນັກຂຽນຄົນນີ້ ເຊິ່ງມີຜົນງານທັງໝົດກວ່າ 100 ບົດ ສະເພາະເລື່ອງສັ້ນ ແມ່ນອາບອີ່ມໄປດ້ວຍກິ່ນຫອມຫວນແຫ່ງຄວາມເອື້ອອາທອນລະຫວ່າງເພື່ອນມະນຸດດ້ວຍກັນ ແລະຕໍ່ສັບພະສິ່ງ.
ພວກເຮົາ ເຊື່ອວ່າຮອຍຍິ້ມແລະຮອຍນ້ຳຕາ ເປັນສິ່ງຄູ່ກັນຢູ່ໃນຕົວທຸກຄົນ ເລື່ອງສັ້ນ ຂອງ ທ່ານອຸທິນ ບຸນຍາວົງ ຈະນຳເອົາທັງສອງອາລົມມາໃຫ້ທ່ານແບບທຳມະດາໆທີ່ສຸດ!

ທີ່ສຳນັກພິມ ແລະຈຳໜ່າຍແຫ່ງລັດ ວັນທີ  ມັງກອນ 2010
ຜູ້ອຳນວຍການ
ວິວັນ ຈັນທະໂຄດ

## ຂໍເວົ້າສູ່ຟັງ

ເມື່ອກະກຽມຕົ້ນສະບັບປຶ້ມ "ຄິດຮອດ ອຸທິນ" ໃນປີ 2002 ນັ້ນເອີ້ນວ່າຂ້ອຍຂຽນໄປດ້ວຍນ້ຳຕານອງໜ້າ ມັນຊຶມອອກຢ່າງກັ້ນບໍ່ຢູ່ ດ້ວຍຄວາມຮູ້ສຶກຄິດຫາອາໄລອາວອນ ເສຍດາຍສາລະພັດ ແຕ່ລູກສາວທັງສອງບອກວ່າ ບໍ່ເປັນຫຍັງ ແມ່ເຮັດໄປແລ້ວ ຫາກຈະລຶ້ງກັບຄວາມຮູ້ສຶກເຊັ່ນນັ້ນ, ເຊິ່ງກໍເປັນຄືລູກເວົ້າຢູ່ ອາລົມສັບສົນວົນວາຍເສົ້າໂສກຄ່ອຍໆຈາງໄປ ນ້ຳຕາອອກໜ້ອຍລົງ ຄືກັບວ່າ ບໍ່ນ້ຳຕາໄດ້ແຫ້ງໄປ ແລະໃນທີ່ສຸດ ປຶ້ມກໍອອກມາທັນເວລາເຮັດບຸນຫາ. ເພື່ອນຜູ້ອ່ານຍາດມິດ ຫຼາຍຄົນບອກວ່າໄດ້ເສຍນ້ຳຕານຳ ແຕ່ກໍໄດ້ບົດຮຽນສຳລັບການຂຽນບັນທຶກສຳລັບຜູ້ຢາກຮຽນຂຽນ ຫຼືນັກຂຽນໃໝ່.

ບັດນີ້ ເວລາຜ່ານໄປໄດ້ທົດສະວັດໜຶ່ງແລ້ວ ຂ້ອຍກັບລູກກໍຍັງບໍ່ວາຍຄິດຮອດຄິດຫາ ອຸທິນ ຢູ່ ຄວາມຄິດຫາອາໄລຍັງຄືເກົ່າ ແຕ່ບໍ່ຮູ້ສຶກເຈັບປວດເສົ້າໂສກອີກຕໍ່ໄປ ສາມາດເລົ່າເຖິງອາການເຈັບປ່ວຍ ການຕໍ່ສູ້ກັບໂລກຮ້າຍຂອງອຸທິນ ໃຫ້ແກ່ຄົນອື່ນໆຟັງຢ່າງລ່ຽນໄຫຼຄ່ອງປາກ ທັງບັງອາດແນະນຳພືດພັນທີ່ເປັນຢາປິ່ນປົວໂລຄາພະຍາດບາງຢ່າງ ເຊິ່ງເປັນບົດຮຽນສະສົມຈາກການທີ່ຂ້ອຍເບິ່ງແຍງ ເວລາອຸທິນເຈັບປ່ວຍ. ກໍເປັນອີກຢ່າງໜຶ່ງທີ່ມາຕື່ມເຕີມຊີວິດທີ່ໄດ້ສູນເສຍສິ່ງໜຶ່ງໄປ ແຕ່ບໍ່ໝາຍຄວາມວ່າ ທົດແທນກັນໄດ້ ແຕ່ກໍມີສ່ວນອຸ້ມຊູຊີວິດໃຫ້ດຳເນີນຢູ່ຕໍ່ໄປຢ່າງມີຄວາມໝາຍ.

ຜ່ານຈາກວິກິດການນັ້ນມາແລ້ວ ກໍສຳນຶກໄດ້ວ່າ ມີຫຍັງອີກແດ່ທີ່ຄວນແກ່ການສືບທອດສານຕໍ່. ເມື່ອສຳຫຼວດກວດກາເບິ່ງ ຂ້ອຍພົບວ່າຜົນງານການຂຽນການແຕ່ງຂອງ ອຸທິນ ຫຼາຍເລື່ອງຫຼາຍບົດເຄີຍໄດ້ຮັບຄວາມນິຍົມຊົມຊອບມາຕະຫຼອດ ດ້ວຍຮູບແບບການນຳສະເໜີ ທີ່ເປັນເອກະລັກ ທັງດ້ານໂຄງສ້າງເລື່ອງ ໃຈຄວາມຫົວເລື່ອງອັນຫຼາກຫຼາຍ ແລະພາສາງ່າຍໆທີ່ ປະຊາຊົນຜູ້ຄົນທຳມະດາສາມັນມັກໃຊ້ກັນ ແຕ່ນັກອ່ານຮຸ່ນໃໝ່ສ່ວນໃຫຍ່ຄົງບໍ່ເຄີຍໄດ້ຍິນໄດ້ອ່ານເລື່ອງເຫຼົ່ານັ້ນແລ້ວ ແລະປຶ້ມທີ່ເຄີຍພິມກໍກາຍເປັນສິ່ງຫາຍາກ ເຊັ່ນດຽວກັບຜົນງານ

ທັງຫຼາຍຂອງນັກຂຽນ ນັກປະພັນອື່ນໆທີ່ລາຈາກໂລກນີ້ໄປແລ້ວ.
ເຖິງວ່າໄດ້ນຳເອົາຊີວິດບາງບົດບາງຕອນ ຂອງອຸທິນມາເລົ່າໄວ້ໃນປຶ້ມ "ຄຶດຮອດ" ແດ່ແລ້ວ ແຕ່ກໍຍັງບໍ່ໝົດອັນເລົ່າແລະສິ່ງສຳຄັນຢາກໃຫ້ຜູ້ອ່ານໄດ້ຮູ້ຈັກຜົນງານອັນເກົ່າແກ່ຂອງອຸທິນ ເມື່ອເລີ່ມຕົ້ນກ້າວເຂົ້າສູ່ຖະໜົນອັກສອນເສັ້ນນີ້ ທີ່ເຂົາໄດ້ມີສ່ວນບຸກເບີກເມື່ອສີ່ສິບປີມາແລ້ວ. ປະຫວັດສາດເປັນສິ່ງທີ່ບໍ່ອາດຫວນຄືນມາແລະບໍ່ມີປະໂຫຍດອັນໃດ ທີ່ຈະຈຸ່ມຈົມຢູ່ກັບຄວາມຫຼັງທີ່ພົ້ນຜ່ານໄປແຕ່ສຳນວນ ລີລາພາສາ ວາທະສິນ ອຸດົມການ ປັດຊະຍາ ແນວຄວາມຄິດຂອງນັກກະວີ ນັກປະພັນ ບໍ່ວ່າຍຸກສະໄໝໃດ ກໍຍັງຄົງເປັນແວ່ນແຍງ ເປັນຄູສອນ ເປັນອາພອນທົ່ງລາສີປະດັບຜືນແຜ່ນດິນ ຄວນແກ່ການສືບທອດໃຫ້ແກ່ລູກຫຼານຕໍ່ໄປ ເພື່ອຈະບໍ່ໃຫ້ມີຄວາມຕ່ຳຕ້ອຍນ້ອຍໃຈໃນເລື່ອງວັນນະຄະດີຈົນໂພດໄປ.
ດັ່ງນັ້ນໃນໂອກາດຄົບຮອບ 10 ປີ ທີ່ອຸທິນໄດ້ຈາກບັນນະໂລກນີ້ໄປ ພວກເຮົາໃນນາມນັກຂຽນ ນັກອ່ານ ແລະຜູ້ສືບທອດມໍລະດົກວັນນະຄະດີໂດຍກົງຄື ຕົວຂ້ອຍເອງທີ່ເປັນຄູ່ຊີວິດ ແລະລູກສາວທັງສອງພ້ອມດ້ວຍເອື້ອຍອ້າຍນ້ອງ ຍາດມິດຈຶ່ງໄດ້ຈັດພິມປຶ້ມ "ຮວມຜົນງານ" ຊຸດນີ້ຂຶ້ນໄວ້ ດ້ານນຶ່ງກໍເພື່ອແຈກຢາຍໃຫ້ເປັນທີ່ລະນຶກ ແລະຈຳໜ່າຍອອກສູ່ວົງກວ້າງ ທັງນີ້ດ້ານໜຶ່ງກໍເພື່ອຕື່ມສີສັນດ້ານວັນນະຄະດີຍຸກປັດຈຸບັນຂອງລາວເຮົາ ຕໍ່ການສະເຫຼີມສະຫຼອງວຽງຈັນ 450 ປີ ທີ່ຈະມາເຖິງ. ບົດຂຽນຜົນງານທີ່ສ້າງສັນຕິດຕໍ່ກັນຍາວນານເຖິງສີ່ສິບປີຊຸດນີ້ ຈະໃຫ້ພາບບັນຍາກາດ ການໃຊ້ຄຳສັບ ພາສາ ຄ່ານິຍົມທາງສັງຄົມ ເສດຖະກິດ ອຸດົມການ ທາງການເມືອງ ຜ່ານໂຕລະຄອນທີ່ແລ່ນເຕັ້ນ ມີຊີວິດຢູ່ໃນເລື່ອງສັ້ນກວ່າຮ້ອຍເລື່ອງ ສາລະຄະດີ ກວ່າສິບເລື່ອງ ແລະເລື່ອງແທ້ໆ ຂອງວິລະຊົນນັກຮົບຈຳນວນໜ້ອຍນຶ່ງເຊິ່ງຂ້ອຍເຫັນວ່າລ້ວນແຕ່ມີຄຸນຄ່າໜ້າສຶກສາ ຫຼື ພຽງແຕ່ອ່ານເອົາຄວາມເພີດເພີນສະບາຍໃຈກໍໄດ້.
ເນື່ອງຈາກວ່າ ອຸທິນ ມີຜົນງານຫຼາກຫຼາຍຮູບແບບ ແລະເພື່ອໃຫ້ຜູ້ອ່ານມີອິດສະຫຼະໃນການເລືອກ ອ່ານເລືອກໃຊ້ ພວກເຮົາຈຶ່ງຈັດແບ່ງຜົນງານຕ່າງໆອອກເປັນ 3 ເຫຼັ້ມ ຕາມລຳດັບປີແລະປະເພດ ພ້ອມດ້ວຍຄຳຄິດເຫັນ ຄຳວິຈານຈາກນັກວິຊາການທັງພາຍໃນແລະຕ່າງປະເທດ ເພາະຜົນງານຈຳນວນໜຶ່ງໄດ້ຮັບການແປເປັນທັງພາສາໄທອັງກິດ ແລະຝຣັ່ງ ຈຶ່ງອາດຈະເປັນບົດຮຽນສຳລັບ ການວິຈານວັນນະຄະດີ ໃຫ້ແກ່ວົງການວິຊາການຢູ່ບ້ານເຮົາແດ່ເລັກນ້ອຍ.

ຖ້າວ່າກຸສົນຜົນບຸນໃດໆ ທີ່ຈະບັງເກີດຂຶ້ນຈາກການໄດ້ອ່ານໄດ້ໃຊ້ເລື່ອງທັງຫຼາຍໃນຜົນງານຊຸດນີ້ ກໍຂໍໃຫ້ມາເປັນສິ່ງຄ້ຳຈຸນເກື້ອໜູນວົງຕະກຸນຍາດພີ່ນ້ອງ ລູກຫຼານໃຫ້ສາມາດດຳເນີນພາລະກິດປົກປັກຮັກສາ ເສີມຂະຫຍາຍ ພາສາວັນນະຄະດີລາວສືບຕໍ່ໄປດ້ວຍ.

ທີ່ ສວນໄຜ່ພັນກໍ່ ເດືອນມັງກອນ 2010
ດວງເດືອນ ບຸນຍາວົງ

## I. ຊີວິດເທິງເສັ້ນທາງການເປັນນັກຂຽນ

ອຸທິນ ບຸນຍາວົງ ເກີດທີ່ບ້ານບໍ່ແຕນ ເມືອງບໍ່ແຕນ ແຂວງໄຊຍະບຸລີ ວັນທີ 8 ສິງຫາ ຄ.ສ. 1942 ກົງກັບມື້ແຮມ 12 ຄ່ຳ ເດືອນ 8 ປີມະເມຍ ພ.ສ. 2485, ເຂົ້າຮຽນມັດທະຍົມທີ່ ວິທະຍາໄລລີເຊປາວີ ວຽງຈັນ, ສ້າງຄອບຄົວກັບ ນາງດວງເດືອນ ວີຣະວົງສ໌ ປີ 1976 ມີລູກສາວນຳກັນ 2 ຄົນ ຄື ອຸດົມພອນ ແລະ ດວງແຂ ບຸນຍາວົງ.

ເຂົ້າສູ່ວົງການຂຽນ ຕັ້ງແຕ່ປາຍຊຸມປີ 1960 ໃຊ້ຫຼາຍນາມປາກກາ ຕົ້ນຕໍເວລາຂຽນເລື່ອງສັ້ນໃຊ້ຊື່ ແລງ ພູຜາເງິນ, ພວງແດດ, ຂຽນສາລະຄະດີອາຊະຍາກຳ ໃຊ້ຊື່ "ຄົນຂ່າວແວ່ນຕາ". ພາຍຫຼັງການປົດປ່ອຍຊາດ ປີ 1975 ເປັນຕົ້ນມາ ໃຊ້ຊື່ແທ້ຂຽນເລື່ອງສັ້ນ ແລະນາມປາກກາ ສ້ອຍສາຍຄຳ ເປັນບາງຄັ້ງ ອຸທິນ ບຸນຍາວົງ ຂຽນແລະຈັດພິມເລື່ອງສັ້ນຂອງຕົນເອງ ໃນປີ 1968 ແລະຂຽນບົດຄວາມອື່ນໆ ລົງໃນໜ້າໜັງສືພິມລາຍວັນມາແຕ່ປີ 1965. ໃນປີ 1972 ໄດ້ເຂົ້າຮ່ວມສັງກັດກຸ່ມນັກຂຽນໄຜ່ໜາມ ວາລະສານລາຍເດືອນທີ່ກໍ່ຕັ້ງໂດຍ ຍາພໍ່ມະຫາສີລາ ວີຣະວົງສ໌, ຂຽນສາລະຄະດີກັບເລື່ອງສັ້ນລົງໃນວາລະສານ "ໄຜ່ໜາມ" ແລະ "ນາງ" ເປັນປະຈຳ. ປີ 1975 ໄດ້ເຂົ້າສັງກັດເປັນພະນັກງານ ລັດຢູ່ສຳນັກພິມຈຳໜ່າຍແຫ່ງຊາດ (ບໍ່ທັນມີກະຊວງຖະແຫຼງຂ່າວແລະວັດທະນະທຳເທື່ອ) ໄລຍະນີ້ ໄດ້ມີຜົນງານເລື່ອງສັ້ນສຳລັບເຍົາວະຊົນ ເລື່ອງສັ້ນແນວສັດຈະທັດສັງຄົມນິຍົມແລະເລື່ອງຈິງຄົນແທ້. ໃນປີ 1978 ໄດ້ຮັບແຕ່ງຕັ້ງເປັນຄະນະບັນນາທິການ ວາລະສານວັນນະສິນຊຸດກໍ່ຕັ້ງຮ່ວມ ກັບມິ້ລາງທ່ານສຸວັນທອນ ບຸຜານຸວົງ ແລະ ນາງ ດາຣາ ວີຣະວົງສ໌ ກັນລະຍາ. ໃນໄລຍະນີ້ໄດ້ສຸມໃສ່ການຂຽນເລື່ອງສັ້ນ ແລະເລື່ອງແປ. ໃນປີ 1981 ໄດ້ຮັບແຕ່ງຕັ້ງໄປປະຈຳຢູ່ກອງບັນນາທິການ ພາສາລາວ ຂອງສຳນັກພິມ Progress (ກ້າວໜ້າ) ທີ່ນະຄອນຫຼວງມົດສະກູ ອະດີດສາທາລະນະລັດສັງຄົມນິຍົມໂຊວຽດຣັດເຊຍ ຈົນຮອດປີ 1985 ຈຶ່ງກັບຄືນມາສັງກັດຢູ່ກົມພິມຈຳໜ່າຍ ຮັບຜິດຊອບພະແນກວັນນະຄະດີຕ່າງປະ

| | | | |
|---|---|---|---|
| 9 ວິນຍານດິບ | " " | " " | " " |
| 10 ລຸງມີ | " " | " " | " " |
| 11 ເລກເກົ້າ | " " | " " | " " |
| 12 ນາງດອກຕຳແຍ | " " | " " | " " |
| 13 ເງິນ ເງິນ ເງິນ | " " | " " | " " |
| 14 ສູນແປດ | " " | " " | " " |
| 15 ສະຫາຍຄົນຫຼັງສຸດ | " " | " " | " " |
| 16 ຊາກຮັກຣິມຝັ່ງນ້ຳປະສັກ | " " | " " | " " |
| 17 ບົດໜຶ່ງແຫ່ງຊີວິດ ນ້ຳຕາໃນສາຍຝົນ | " | " " | " " |
| 18 ບົດໜຶ່ງແຫ່ງຊີວິດ ວັນສຸດທ້າຍ | " " | " " | " " |
| **ຊຸດ ຜູ້ຍິງນໍ້ຜູ້ຍິງ** | 1968 | ຕົນເອງ | ແລງ ພູຜາເງິນ |
| 19 ຜູ້ຍິງນໍ້ຜູ້ຍິງ | " " | " " | " " |
| 20 ເຮົາຮັກກັນບໍ່ໄດ້ | " " | " " | " " |
| 21 ຕາມເຄີຍ | " " | " " | " " |
| 22 ກຳຂອງໃຜ | " " | " " | " " |
| 23 ທາງສາຍຄູວຽງ | " " | " " | " " |
| 24 ຂໍຢ່າໃຫ້ເຮົາພົບກັນດີກວ່າ | " " | " " | " " |
| 25 ລຸງສ່ຽວ | " " | " " | " " |
| 26 ອຳນາດພອນ | " " | " " | " " |
| 27 ກຳຂອງບັກກີ້ກີ້ | " " | " " | " " |
| 28 ສຽງສະອື້ນຈາກວຽງພູຄາ | " " | " " | " " |
| 29 ຝົນລິນທີ່ຫ້ວຍໝໍ້ | " " | " " | " " |
| 30 ນາງຜູ້ຄ່ຽມຄົມ | " " | " " | " " |
| 31 ດອກໄມ້ໄຮ້ຄ່າ | " " | " " | " " |
| 32 ໝອນຂ້າງກັບໜາມໝາກຈັບ | " " | " " | " " |
| 33 ລົມແລ້ງ | " " | " " | " " |
| 34 ຕົ້ນເຫດ | " " | " " | " " |
| 35 ເດືອນດັບທີ່ວຽງຈັນ | " " | " " | " " |
| 36 ຂັ້ນໄດຂັ້ນສຸດທ້າຍ | " " | " " | " " |
| 37 ບໍ່ເໝືອນຕາຍຈາກກັນ | " " | " " | " " |
| 38 ນ້ຳໃຈ | " " | " " | " " |
| 39 ແມງໄມ້ເຂົ້າຕາ | " " | " " | " " |

ຍ

ສ

## I. ຊີວິດເທິງເສັ້ນທາງການເປັນນັກຂຽນ

ອຸທິນ ບຸນຍາວົງ ເກີດທີ່ບ້ານບໍ່ແຕນ ເມືອງບໍ່ແຕນ ແຂວງໄຊຍະບຸລີ ວັນທີ 8 ສິງຫາ ຄ.ສ. 1942 ກົງກັບມື້ແຮມ 12 ຄໍ່າ ເດືອນ 8 ປີມະເມຍ ພ.ສ. 2485, ເຂົ້າຮຽນນັດທະຍົມທີ່ ວິທະຍາໄລລີເຊປາວີ ວຽງຈັນ, ສ້າງຄອບຄົວກັບ ນາງດວງເດືອນ ວີຣະວົງສ໌ ປີ 1976 ມີລູກສາວນໍາກັນ 2 ຄົນ ຄື ອຸດົມພອນ ແລະ ດວງແຂ ບຸນຍາວົງ.

ເຂົ້າສູ່ວົງການຂຽນ ຕັ້ງແຕ່ປາຍຊຸມປີ 1960 ໃຊ້ຫຼາຍນາມປາກກາ ຕົ້ນຕໍເວລາຂຽນເລື່ອງສັ້ນໃຊ້ຊື່ ແລງ ພູຜາເງິນ, ພວງແດດ, ຂຽນສາລະຄະດີອາຊະຍາກໍາ ໃຊ້ຊື່ "ຄົນຂ່າວແວ່ນຕາ". ພາຍຫຼັງການປົດປ່ອຍຊາດ ປີ 1975 ເປັນຕົ້ນມາ ໃຊ້ຊື່ແທ້ຂຽນເລື່ອງສັ້ນ ແລະນາມປາກກາ ສ້ອຍສາຍຄໍາ ເປັນບາງຄັ້ງ ອຸທິນ ບຸນຍາວົງ ຂຽນແລະຈັດພິມເລື່ອງສັ້ນຂອງຕົນເອງ ໃນປີ 1968 ແລະຂຽນບົດຄວາມອື່ນໆ ລົງໃນໜ້າໜັງສືພິມລາຍວັນມາແຕ່ປີ 1965. ໃນປີ 1972 ໄດ້ເຂົ້າຮ່ວມສັງກັດກຸ່ມນັກຂຽນໄຜ່ໜາມ ວາລະສານລາຍເດືອນທີ່ກໍ່ຕັ້ງໂດຍ ຍາພໍ່ມະຫາສິລາ ວີຣະວົງສ໌, ຂຽນສາລະຄະດີກັບເລື່ອງສັ້ນລົງໃນວາລະສານ "ໄຜ່ໜາມ" ແລະ "ນາງ" ເປັນປະຈໍາ. ປີ 1975 ໄດ້ເຂົ້າສັງກັດເປັນພະນັກງານ ລັດຢູ່ສໍານັກພິມຈໍາໜ່າຍແຫ່ງຊາດ (ບໍ່ທັນມີກະຊວງຖະແຫຼງຂ່າວແລະວັດທະນະທໍາເທື່ອ) ໄລຍະນີ້ ໄດ້ມີຜົນງານເລື່ອງສັ້ນສໍາລັບເຍົາວະຊົນ ເລື່ອງສັ້ນແນວສັດຈະທັດສັງຄົມນິຍົມແລະເລື່ອງຈິງຄົນແທ້. ໃນປີ 1978 ໄດ້ຮັບແຕ່ງຕັ້ງເປັນຄະນະບັນນາທິການ ວາລະສານວັນນະສິນຊຸດກໍ່ຕັ້ງຮ່ວມ ກັບມື້ລາງທ່ານສຸວັນທອນ ບຸຜານຸວົງ ແລະ ນາງ ດາຣາ ວີຣະວົງສ໌ ກັນລະຍາ. ໃນໄລຍະນີ້ໄດ້ສຸມໃສ່ການຂຽນເລື່ອງສັ້ນ ແລະເລື່ອງແປ. ໃນປີ 1981 ໄດ້ຮັບແຕ່ງຕັ້ງໄປປະຈໍາຢູ່ກອງບັນນາທິການ ພາສາລາວ ຂອງສໍານັກພິມ Progress (ກ້າວໜ້າ) ທີ່ນະຄອນຫຼວງມົດສະກູ ອະດີດສາທາລະນະລັດສັງຄົມນິຍົມໂຊວຽດຣັດເຊຍ ຈົນຮອດປີ 1985 ຈຶ່ງກັບຄືນມາສັງກັດຢູ່ກົມພິມຈໍາໜ່າຍ ຮັບຜິດຊອບພະແນກວັນນະຄະດີຕ່າງປະ

ເທດ. ບົດຂຽນຕ່າງໆ ຕົ້ນຕໍແມ່ນເລື່ອງສັ້ນສໍາລັບໄວໜຸ່ມ ແລະ ສໍາລັບເຍົາວະຊົນ ນອກນັ້ນ ແມ່ນບົດແປວັນນະກໍາຕ່າງປະເທດ ນິທານບູຮານລາວຮຽບຮຽງເປັນຄໍາທໍາມະດາ ບົດຄວາມວິຊາການ ສາລະຄະດີ ເລື່ອງຕະຫຼົກແລະ ບົດກະວີຈໍານວນເລັກນ້ອຍ.

ໃນປີ 1992 ໄດ້ລາພັກວຽກ ແລະຕິດຕາມເມຍ (ດວງເດືອນ ບຸນຍາວົງ) ທີ່ໄດ້ຮັບເຊີນເປັນອາຈານສອນພາສາ ວັດທະນະທໍາລາວ ທີ່ມະຫາວິທະຍາໄລວໍຊິງຕັນ ສະຫະລັດອາເມຣິກາ ກໍານົດໜຶ່ງປີເຄິ່ງ, ເມື່ອກັບຄືນມາໃນປີ 1993 ກໍໄດ້ລາອອກຈາກລັດຖະການ ແລະປະກອບທຸລະກິດໂຮງພິມໄຜ່ໜາມກັບຄອບຄົວ.

ໃນເດືອນມີນາ ປີ 1994 ຂະນະທໍາໜ້າທີ່ເປັນຜູ້ດູແລການຕັກບາດໃນໂອກາດເຮັດບຸນທານທາ ຍາແມ່ສະຫຼົດ ເຈົ້າຊຽວ, ທີ່ບ້ານຊຸນຕາເມືອງສີໂຄດຕະບອງ ຜູ້ເປັນອາ ຮ່ວມກັບຄອບຄົວເອື້ອຍຟອງສະໝຸດໂງ່ນວໍລະຣາດ ເອື້ອຍສາຄອນ ພະໄຊຍະວົງ ແລະຍາດພີ່ນ້ອງອື່ນໆກໍເກີດອຸບັດເຫດ ໄມ້ຂາງເຮືອນຫ້ອງລະບຽງຫຼຸດ ພື້ນເຮືອນຫຼົ່ງງຕົກລົງ ຕູ້ວາງບາດລົ້ມທັບຂໍ່ຂາຂ້າງຊາຍຫັກແຕກມຸ່ນ. ເປັນທີ່ແປກປະຫຼາດວ່າ ໃນການເກີດອຸບັດເຫດຄັ້ງນີ້ ອຸທິນ ໄດ້ຮັບບາດເຈັບສາຫັດກວ່າທຸກຄົນ ທັງໆທີ່ມີຄົນນັ່ງຢູ່ໃນຫ້ອງ ຮ່ວມກັນ 40 ກວ່າຄົນ ເຊິ່ງເລື່ອງນີ້ ອຸທິນມັກເວົ້າວ່າ ດີແລ້ວທີ່ຕົນເອງເຈັບຮັບເຄາະມາຄົນດຽວ. ຄວາມຈິງໃນການກະກຽມບຸນກອງບວດຄັ້ງນີ້ ຂ້ອຍໄດ້ສະເໜີໃຫ້ ອຸທິນບວດ ເພາະເຈົ້າອາເປັນຜູ້ມີອຸປະກາລະຄຸນຕໍ່ພວກເຮົາທັງໝົດໂດຍສະເພາະເປັນຜູ້ລ້ຽງມາພາໃຫຍ່ ແຕ່ອຸທິນເຫັນວ່າ ຕົນຕ້ອງເປັນຜູ້ກະກຽມວຽກ ຈຶ່ງໃຫ້ຫຼານຊາຍທ້າວນິພົນ ລູກຂອງອາລະໄມບວດແທນ. ຂ້ອຍມັກເວົ້າຢອກວ່າ ຖ້າບວດແລ້ວກໍບໍ່ເຈັບໂຕ ເພາະພຣະທີ່ມາຮ່ວມໃນພິທີນັ່ງຢູ່ຫ້ອງຊັ້ນເທິງ. ອຸທິນເຂົ້າປິ່ນປົວຮັບການຜ່າຕັດກະດູກ ໃສ່ເຫຼັກດາມຂາໄວ້ ຢູ່ໂຮງໝໍມະໂຫສົດ ໂດຍມີທ່ານໝໍຄໍາອ່ອນ ດວງບຸຜາ ແລະ ຄະນະ. ແຕ່ນັ້ນມາກໍມັກຈະເອີ້ນຢອກກັນວ່າເປັນມະນຸດເຫຼັກ ຢູ່ຫຼາຍປີຈົນເຖິງໃນປີ 1996 ຈຶ່ງໄດ້ ຮັບການຜ່າຕັດເອົາເຫຼັກທີ່ດາມໄວ້ອອກຢູ່ໂຮງໝໍມິດຕະພາບ 150 ຕຽງ ທີ່ໂພນຕ້ອງ.

ລະຫວ່າງປີ 1993-97 ໄດ້ສະໝັກຮັບເລືອກຕັ້ງຄະນະບໍລິຫານງານຂອງສະມາຄົມນັກປະພັນລາວ ແລະໄດ້ເຂົ້າຮັບໜ້າທີ່ຢູ່ໃນກອງບ.ກ. ໜັງສືພິມສຽງແຄນລາວ ປາກກະບອກສຽງຂອງສະມາຄົມນັກປະພັນລາວ ໄລຍະນີ້ກໍຂຽນບົດຄວາມສາລະຄະດີສັ້ນໆລົງເປັນປະຈໍາ. ລະຫວ່າງປີ 1997 – 1998 ລົງມືປຸກສ້າງເຮືອນບູຮານ ຢູ່ສວນໄຜ່ພັນກໍ

ຊື່ວ່າ ຫໍມູນແຖນແຕ່ງ ສຳລັບເປັນພິພິທະພັນຜ້າແພຂອງຄອບຄົວ ແລະໃນທ້າຍປີ ກໍໄດ້ຮັບເຊີນໄປເປັນອາຈານພິເສດ ສອນພາສາວັນນະຄະດີລາວ ທີ່ມະຫາວິທະຍາໄລພາສາຕ່າງປະເທດທີ່ໂຕກຽວ ປະເທດຍີ່ປຸ່ນ. ໄດ້ຮັບຕຳແໜ່ງຮອງສາສະດາຈານ ຈາກມະຫາວິທະຍາໄລ. ໄລຍະນີ້ໄດ້ຂຽນບົດຄວາມ ແລະໄປປາຖະກະຖາຕາມສະຖາບັນການສຶກສາຕ່າງໆຫຼາຍບ່ອນ. ອຸທິນເລີ່ມເຈັບປ່ວຍ ຕັ້ງແຕ່ກາງລະດູຮ້ອນ (ເດືອນມິຖຸນາ) ປີ 1999 ແລະໄດ້ເຂົ້າປິ່ນປົວຮັກສາໂຕຢູ່ຫຼາຍໂຮງໝໍທັງທີ່ຍີ່ປຸ່ນ ແລະປະເທດໄທ, ໝົດອາຍຸໄຂ ເວລາບ່າຍໂມງປາຍ ວັນທີ 30 ມັງກອນ ປີ 2000 ທີ່ບ້ານສວນໄຜ່ພັນກໍ ເມືອງໄຊທານີ ນະຄອນຫຼວງວຽງຈັນ. ຮວມອາຍຸ ໄດ້ 57 ປີ. ພິທີສົ່ງສະການຈັດຂຶ້ນໃນວັນທີ 4 ກຸມພາ 2000 ທີ່ສວນໄຜ່ພັນກໍ ແລະໃນປີຕໍ່ມາທາງຄອບຄົວ ໄດ້ສ້າງອະນຸສອນນ້ອຍໆໃສ່ກັບທີ່ ເປັນບ່ອນບັນຈຸອັດຖິ ຢູ່ຖ້າມກາງທຳມະຊາດ ສວນດອກໄມ້ ຕົ້ນຈຳປານາງສີ ຕົ້ນຂາມຕົ້ນມ່ວງ ...

## II. ຜົນງານຕ່າງໆ ກ່ອນ ປີ 1975

1. ປະເພດເລື່ອງສັ້ນ: ອຸທິນເລີ່ມຂຽນເລື່ອງສັ້ນ ປະເພດບັນເທີງເບົາໆຕະຫຼົກໆ ສອດແຊກຄະຕິເຕືອນໃຈກ່ຽວກັບການດຳລົງຊີວິດຂອງຜູ້ຄົນທຳມະດາທີ່ຕ້ອງເພິ່ງພາອາໄສກັນ.

| ລຳດັບ | ຊື່ເລື່ອງ/ຊື່ປຶ້ມ | ປີພິມ | ຜູ້ຈັດພິມ | ນາມປາກກາ |
|---|---|---|---|---|
| **I** | **ຊຸດ ຊີວິດນີ້ຄືລະຄອນກ້ອມ** | 1966 | ຕົນເອງ | ແລງພູຜາເງິນ |
| 1 | ວຽງຈັນສະແຄ | " " | " " | " " |
| 2 | ກາຫລົງ | " " | " " | " " |
| 3 | ກ່ອນຈະສິ້ນແສງທຽນ | " " | " " | " " |
| 4 | ເມດອິນລາວໂອສ | " " | " " | " " |
| 5 | ໂຈນເຮງຊວຍ | " " | " " | " " |
| 6 | ໄຊກແລ່ນທັບ | " " | " " | " " |
| 7 | ຄົນປ່ອຍຕຽງເປົ່ຫ້າ | " " | " " | " " |
| 8 | ກັບບ້ານ | " " | " " | " " |

| | | | |
|---|---|---|---|
| 9 ວິນຍານດິບ | " " | " " | " " |
| 10 ລຸງມີ | " " | " " | " " |
| 11 ເລກເກົ້າ | " " | " " | " " |
| 12 ນາງດອກຕຳແຍ | " " | " " | " " |
| 13 ເງິນ ເງິນ ເງິນ | " " | " " | " " |
| 14 ສູນແປດ | " " | " " | " " |
| 15 ສະຫາຍຄົນຫຼັງສຸດ | " " | " " | " " |
| 16 ຊາກຮັກຮິມຝັ່ງນ້ຳປະສັກ | " " | " " | " " |
| 17 ບົດໜຶ່ງແຫ່ງຊີວິດ ນ້ຳຕາໃນສາຍຝົນ | " | " " | " " |
| 18 ບົດໜຶ່ງແຫ່ງຊີວິດ ວັນສຸດທ້າຍ | " " | " " | " " |
| **ຊຸດ ຜູ້ຍິງນໍ້ຜູ້ຍິງ** | 1968 | ຕົນເອງ | ແລງ ພູຜາເງິນ |
| 19 ຜູ້ຍິງນໍ້ຜູ້ຍິງ | " " | " " | " " |
| 20 ເຮົາຮັກກັນບໍ່ໄດ້ | " " | " " | " " |
| 21 ຕາມເຄີຍ | " " | " " | " " |
| 22 ກຳຂອງໃຜ | " " | " " | " " |
| 23 ທາງສາຍຄູວຽງ | " " | " " | " " |
| 24 ຂໍຢ່າໃຫ້ເຮົາພົບກັນດີກວ່າ | " " | " " | " " |
| 25 ລຸງສ່ຽວ | " " | " " | " " |
| 26 ອຳນາດພອນ | " " | " " | " " |
| 27 ກຳຂອງບັກກີ້ກີ້ | " " | " " | " " |
| 28 ສຽງສະອື້ນຈາກວຽງພູຄາ | " " | " " | " " |
| 29 ຝົນລິນທີ່ຫ້ວຍໝໍ້ | " " | " " | " " |
| 30 ນາງຜູ້ຄ່ຽມຄົມ | " " | " " | " " |
| 31 ດອກໄມ້ໄຮ້ຄ່າ | " " | " " | " " |
| 32 ໝອນຂ້າງກັບໜາມໝາກຈັບ | " " | " " | " " |
| 33 ລົມແລ້ງ | " " | " " | " " |
| 34 ຕົ້ນເຫດ | " " | " " | " " |
| 35 ເດືອນດັບທີ່ວຽງຈັນ | " " | " " | " " |
| 36 ຂັ້ນໄດຂັ້ນສຸດທ້າຍ | " " | " " | " " |
| 37 ບໍ່ເໝືອນຕາຍຈາກກັນ | " " | " " | " " |
| 38 ນ້ຳໃຈ | " " | " " | " " |
| 39 ແມງໄມ້ເຂົ້າຕາ | " " | " " | " " |

**ເລື່ອງສັ້ນລົງໃນວາລະສານອື່ນໆ**

| | | | | |
|---|---|---|---|---|
| 40 | ແດງຈັນ | 06/1972 | ໄຜ່ໜາມ 1 | |
| 41 | ລາຄາຂອງຄວາມຕາຍ | 07/1972 | ໄຜ່ໜາມ 2 | ພິມຊ້ຳຄືນ |
| 42 | ບໍ່ບານສັງມາຫອມ | 1972 | ໄຜ່ໜາມພິເສດ /ບໍ່ບານຫອມ | ແລງ ພູຜາເງິນ |
| 43 | ເຮືອນເຊົ່າສີຟ້າຈາງໆ | 1972 | ໄຜ່ໜາມພິເສດ /ບໍ່ບານຫອມ | ແລງ ພູຜາເງິນ |
| 44 | ສຳນຶກຂອງຈິໂກະ | 1972 | ໄຜ່ໜາມພິເສດ /ບໍ່ບານຫອມ | ແລງ ພູຜາເງິນ |
| 45 | ລ.ຕ.ວ.ລ. | 1972 | ໄຜ່ໜາມພິເສດ /ບໍ່ບານຫອມ | ແລງ ພູຜາເງິນ |
| 46 | ຍິ້ມສີເຫຼືອງ | 1973 | ໄຜ່ໜາມພິເສດ / ລືມສັນຍາ | ແລງ ພູຜາເງິນ |
| 47 | ນິຍາຍນີ້ຍັງບໍ່ສຸດ | 1972 | ວາລະສານນາງ /ນາງ 1 | ແລງ ພູຜາເງິນ |
| 48 | ແຫວນວົງບ້ງວ | 1973 | ວາລະສານນາງ /ນາງ 4 | ແລງ ພູຜາເງິນ |
| 49 | ຂ້ອຍບໍ່ຢາກນັ່ງບ່ອນຄົນມີກຸງດ | 1972 | ໄຜ່ໜາມ | ແລງ ພູຜາເງິນ |
| 50 | ຮັກນີ້ແສນຍາກ | 09/1972 | ໄຜ່ໜາມ 4 | ແລງ ພູຜາເງິນ |
| 51 | ບັກດິ້ກບັກແດ້ງ | 1974 | ຟ້າໃໝ່ / ສະໂມສອນອສສ | ແລງ ພູຜາເງິນ |
| 52 | ຕາຍຢ່າງໝາ | 1975 | ໄຜ່ໜາມ 38 | ແລງພູຜາເງິນ |

2. ປະເພດບົດຄວາມສັ້ນໆ ເທົ່າທີ່ເກັບກຳໄດ້ (ອາດຈະມີຫຼົງເຫຼືອຢູ່ທາງອື່ນ) ລັກສະນະບົດຄວາມ ຂອງອຸທິນ ອອກມາໃນແບບເຄິ່ງສາລະຄະດີບັນເທີງ ມີຂໍ້ມູນເກັບກຳມາແທ້ ແຕ່ຂຽນດ້ວຍສຳນວນງ່າຍ ຕະຫຼົກ ແກມສຽດສີເລັກນ້ອຍ ດັ່ງບົດ ປັດຊະຍາເທິງຝາວິດ ທີ່ຈະມີຂໍ້ຄວາມຂຽນໄວ້ຕາມຝາວິດ ບົດກະວີສັ້ນໆ ໃນຫ້ອງນ້ຳຕ່າງໆໃນວຽງຈັນ ຍຸກ 1970 ທີ່ສະທ້ອນຄວາມຈະເລີນລະດັບການພັດທະນາຈິດໃຈຜູ້ຄົນ ແບບວ່າບໍ່ຕ້ອງວິໄຈຂໍ້ມູນໃຫ້ຫຍຸ້ງ ຍາກເກີນໄປ.

| ລ/ດ | ຊື່ເລື່ອງ/ຊື່ປຶ້ມ | ປີພິມ | ຜູ້ຈັດພິມ | ຊື່/ນາມປາກກາ |
|---|---|---|---|---|
| 1 | ຈິຈິ ອັນອັນ | 1973 | ໄຜ່ໜາມ 8 /ເລື່ອງຂອງພີແພນດາ | ອຸທິນ ບຸນຍາວົງ |

2 ມະຫາລາຊາສະອື້ນ 1973 ໄຜ່ໜາມ 13
/ຕົວຢ່າງຊີວິດລາຊາໃນອິນເດຍ

3 ນັດພົບກັນທີ່ເມືອງຜີ 1973 ໄຜ່ໜາມ 14

4 ເຜີ 2000 ລ້ານ ໄຜ່ໜາມ 27
/ສະຖິຕິການກິນເຜີຂອງຄົນວຽງຈັນ

5 ປັດຊະຍາເທິງຝາວິດ 1973 ໄຜ່ໜາມ

6 ເມົາເຊີຕຸງ ຜູ້ຍິ່ງໃຫຍ່ ໄຜ່ໜາມ 28

7 ຍິບຊີ ທີ່ຖືກລືມ ໄຜ່ໜາມ 29

8 ແຕ້ງແຕງ ໄຜໜາມ 31

9 ພາສາສາກົນ ໄຜ່ໜາມ 27

10 ລາວເວົ້າໄທ-ໄທບໍ່ເວົ້າລາວ 1974 ຟ້າໃໝ່
/ສະໂມສອນອັກສອນສິນ

11 ເປັນຜູ້ບ່າວນີ້ ແສນຍາກ 1972 ໄຜ່ໜາມ

12 ເລື່ອງກິນ 1973 ໄຜ່ໜາມ

## II. ຜົນງານແຕ່ 1976-1995

ພາຍຫຼັງການປະຕິວັດຊາດປະຊາທິປະໄຕ ປີ 1975 ອຸທິນ ບຸນຍາວົງ ໄດ້ເຂົ້າສັງກັດເປັນພະນັກງານລັດ ປະຈຳຢູ່ສຳນັກພິມຈຳໜ່າຍລາວຮັກຊາດ (ຕໍ່ມາປ່ຽນເປັນກົມພິມຈຳໜ່າຍ) ແລະຂຶ້ນກັບກະຊວງຖະແຫຼງຂ່າວແລະວັດທະນະທຳສືບຕໍ່ມາ ຈົນຮອດ 1992 ໄດ້ມີຜົນງານຂຽນຕໍ່ເນື່ອງກັນ ມາບໍ່ຂາດໄລຍະ. ຈົນເທົ້າເຖິງວັນເຈັບປ່ວຍຂະນະທີ່ເປັນອາຈານສອນພາສາລາວ ທີ່ມະຫາວິທະຍາໄລການສຶກສາຕ່າງປະເທດທີ່ໂຕກຽວ ປະເທດຍີ່ປຸ່ນ (1998-2000) ກໍເລີ່ມຕົ້ນຂຽນນິຍາຍຍາວສຳລັບເຍົາວະຊົນໄວ້ສອງເລື່ອງ.

ບົດຂຽນໃນພາກນີ້ ມີຫຼາຍແບບທັງເລື່ອງສັ້ນສຳລັບໄວໜຸ່ມ ເລື່ອງສຳລັບເຍົາວະຊົນ 9 ເລື່ອງ ໃນຊຸດ ປາຄໍ່ໂລພາ(1978) ທີ່ໄດ້ຮັບເລືອກໄປພິມເປັນພາສາໄທ ແຕ່ປີ 1988 ແລະຖືກນຳມາເປັນປຶ້ມເລື່ອງປະກອບຮູບ ໃນຊຸມຕົ້ນປີ 1990 ໂດຍກະຊວງສຶກສາທິການ ອົງການ UNICEF ອົງການສຶກສາບໍ່ມີພົມແດນ (ESF) ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ (ASPB – ALC), ສະມາຄົມພັດທະນາເດັກລາວຍີ່ປຸ່ນ (SVA) ...

| ລ/ດ | ຊື່ເລື່ອງ | ປີພິມ | ຜູ້ຈັດພິມ | ຊື່ |
|---|---|---|---|---|
| **1** | **<u>ເລື່ອງສຳລັບໄວໜຸ່ມ</u>** | | | ອຸທິນບຸນຍາວົງ |
| 1 | ງານບ້ານເກີດ | 1976 | ສຳນັກຈຳໜ່າງລາວຮັກຊາດ<br>ຊຸດງານບ້ານເກີດ | |
| 2 | ລຸງຊຽວ | 1976 | " " | " " |
| 3 | ຕາເວັນຂຶ້ນທີ່ດອນນາງ | 78-83 | ສຳນັກພິມຈຳໜ່າຍສ.ປ.ປ.ລາວ<br>ຊຸດຕາເວັນຂຶ້ນທີ່ດອນນາງ | |
| 4 | ແກ້ວປັກຕີນ | " " | " " | " " |
| 5 | ປ້າແຈ່ມ | 1978 | ສຳນັກພິມຈຳໜ່າຍສ.ປ.ປ.ລາວ<br>ຊຸດສຽງເອີ້ນຂອງໃຜ | |
| 6 | ແຫວນເພັດຂອງແນນຊີ | " " | " " | " " |
| 7 | ຄືນງາມ | " " | " " | " " |
| 8 | ເລື່ອງຂອງສົມເຕື່ອຍ | " " | " " | " " |
| 9 | ສຽງຈາກທົ່ງໄຫຫີນ | " " | " " | " " |
| 10 | ຍິ້ມນັ້ນ | 1989 | ກົມພິມຈຳໜ່າຍ/ກະຊວງ ຖ.ວ.<br>ຊຸດຍິ້ມນັ້ນ | |
| 11 | ເບື້ອງຫຼັງ | " " | " " | " " |
| 12 | ພໍ່ແທ້ | " " | " " | " " |
| 13 | ນ້ຳໃຈເອື້ອຍແພງດີ | " " | " " | " " |
| 14 | ມູນມັນແພງ | " " | " " | " " |
| 16 | ຊຸກຍູ້ | " " | " " | " " |
| 17 | ນົກບິນຂ້າມປາຍຕານ | 1991 | ກົມວັນນະຄະດີ | ຊຸດແພງແມ່ * |
| 18 | ໝົກເຫົ່າ | " " | " " | " " |
| 19 | ປະກອບສ່ວນ | " " | " " | " " |
| 20 | ໝູ່ພໍ່ | " " | " " | " " |
| 21 | ຫ້າສິບກີບ | " " | " " | " " |
| 22 | ຍາມແມ່ຈາກໄປ | " " | " " | " " |
| 23 | ແຮງເສຽສະຫຼະ | " " | " " | " " |
| 24 | ຮຽນຢູ່ເຮືອນ | 1995 | UNICEF | ຊຸດ ນາງຄືນນັ້ນ |
| **2** | **<u>ເລື່ອງສຳລັບເຍົາວະຊົນ</u>** | | | |
| 25 | ປາຄໍໂລພາ | 1978 | ສຳນັກພິມຈຳໜ່າງ ສ.ປ.ປ.ລາວ<br>ຊຸດປາຄໍໂລພາ* | |

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ